Produced by NSW HEALTH DEPARTMENT

multicultural communication

Lao
November 2002
[DOH-7095]

# ການຕິດເຊື້ອໄວຣັສບາຣ໌ມາຟໍແຣສ

## Barmah Forest virus infection

### ບາຣ໌ມາຟໍແຣສແມ່ນຫຍັງ?

- ເຊື້ອໄວຣັສບາຣ໌ມາຟໍແຣສແມ່ນພຍາດຊນິດນຶ່ງຊຶ່ງສາມາດແຜ່ພາຍເຊື້ອເຖິງຄົນໄດ້ໂດຍການຖືກຍູງກັດ.
- ການທີ່ເຄີຍຕິດເຊື້ອບາຣ໌ມາຟໍແຣສມາກ່ອນອາດປ້ອງກັນຈາກການຕິດເຊື້ອໃນອະນາຄົດໄດ້.
- ເຊື້ອໄວຣັສບາຣ໌ມາຟໍແຣສມີສ່ວນກ່ຽວຂ້ອງກັນກັບເຊື້ອໄວຣັສ ຣອສຣິເວີ (Ross River).

### ເຊື້ອໄວຣັສບາຣ໌ມາຟໍແຣສແຜ່ພາຍຢ່າງໃດ?

- ເຊື້ອໄວຣັສນີ້ແຜ່ພາຍໂດຍຍູງໂຕແມ່ບາງຊນິດ
- ຍູງໂຕແມ່ຈະດູດກິນເລືອດສັດແລະຄົນ. ຖ້າມັນດູດກິນເລືອດສັດທີ່ຕິດເຊື້ອຢູ່ແລ້ວ, ຍູງໂຕນັ້ນກໍອາດຕິດເຊື້ອໄປນຳ. ຫຼັງຈາກນັ້ນ ເຊື້ອໄວຣັສກໍຈະແຜ່ເຊື້ອໄປຫາສັດໂຕຕໍ່ໄປຫຼືຄົນ ຕໍ່ໄປທີ່ມັນດູດເລືອດ.
- ມີການເຊື່ອກັນວ່າ ສັດພື້ນບ້ານເຊັ່ນ ແຄັງກາຣູ ແລະ ວອລລາບີ ເປັນສາເຫດໃຫຍ່ໃນການເຮັດໃຫ້ການຕິດເຊື້ອນີ້ໝູນວຽນໄປມາ.
- ເຊື້ອໄວຣັສນີ້ຈະບໍ່ແຜ່ໂດຍຕົງຈາກຄົນນຶ່ງໄປຫາອີກຄົນນຶ່ງ.

### ຄົນທີ່ຕິດເຊື້ອບາຣ໌ມາຟໍແຣສຈະມີອາການຢ່າງໃດແດ່?

- ມີຫຼາຍຄົນທີ່ຕິດເຊື້ອໄວຣັສນີ້ແລ້ວແຕ່ບໍ່ມີອາການຫຍັງເລີຍ.
- ອາການຂອງເຊື້ອບາຣ໌ມາຟໍແຣສຄ້າຍຄືກັນກັບການຕິດເຊື້ອໄວຣັສຣອສຣິເວີ.
- ອາດຈະເກີດອາການຄ້າຍໄຂ້ຫວັດໃຫຍ່, ມີອາການຄີງຮ້ອນ, ໜາວສັ່ນ, ເຈັບຫົວ, ແລະເຈັບຕາມກ້າມເນື້ອແລະຕາມຂໍ່.
- ບາງຄົນກໍອາດມີອາການໃຄ່ແລະປວດຕາມຂໍ່, ຊຶ່ງຈະສັງເກດເຫັນໄດ້ຊັດເຈນໃນຍາມເຊົ້າ.
  - ບາງເທື່ອຈະເກີດເປັນຕຸ່ມຜື່ນແດງຕາມຮ່າງກາຍ ຫຼືຕາມ ແຂນ ຫຼືຂາ. ຕຸ່ມນີ້ຕາມປົກກະຕິ ຈະ ຫາຍໄປຫຼັງຈາກເຈັດຫາສິບວັນ.
  - ໃນລະຫວ່າງທີ່ເປັນພຍາດຢູ່ນັ້ນ ບາງຄັ້ງ ອາດຈະມີຄວາມຮູ້ສຶກບໍ່ສະບາຍທົ່ວໆໄປໃນໂຕ, ພ້ອມທັງ ຮູ້ສຶກເມື່ອຍຫຼືອ່ອນເພັຍ. ອາການເຫຼົ່ານີ້ອາດເຮັດໃຫ້ມີຜົນສະທ້ອນ ຕໍ່ ທັງການດຳຣົງຊີວິດປະຈຳວັນ ແລະ ປະສິດທິພາບ ໃນການເຮັດວຽກ.

## ດົນປານໃດຈຶ່ງອອກອາການຫຼັງຈາກຖືກຍຸງທີ່ມີເຊື້ອກັດແລ້ວ?

- ອາການຕ່າງໆຈະເລີ້ມໃນລະຫວ່າງ 5-21 ມື້, ແຕ່ວ່າຕາມປົກກະຕິແມ່ນໃນລະຫວ່າງ 7-10 ມື້ຫຼັງຈາກຖືກຍຸງທີ່ມີເຊື້ອໂຣກກັດ.

## ຈະເປັນພຍາດນີ້ດົນປານໃດ?

- ຄົນສ່ວນຫຼາຍຈະເຊົາຫາຍຂາດຫຼັງຈາກສອງສາມອາທິດ. ຄົນອື່ນໆອາດມີອາການເປັນໆ ຢຸດໆ ຢູ່ເກີນ ສາມເດືອນ, ແລະໃນກໍຣະນີນ້ອຍທີ່ສຸດຊຶ່ງມີອາການເກີນກວ່ານຶ່ງປີ.
- ຄົນທີ່ເປັນພຍາດນີ້ສາມາດເຊົາຫາຍຂາດໄດ້.

## ການປິ່ນປົວການຕິດເຊື້ອບາຣ໌ມາຟໍແຣສມີແບບໃດແດ່?

- ບໍ່ມີການປິ່ນປົວການຕິດເຊື້ອໄວຣັສ ບາຣ໌ມາຟໍແຣສແບບໃດແບບນຶ່ງສະເພາະ.
- ທ່ານໝໍຂອງທ່ານຈະສາມາດຊ່ວຍໃຫ້ບັນເທົາອາການບໍ່ສະບາຍໃນໂຕທີ່ເກີດຈາກອາການຕ່າງໆ ໄດ້.
- ການພັກຜ່ອນໃຫ້ເຕັມປ່ຽມ, ພ້ອມທັງອອກແຮງກາຍປານກາງ ແລະ ກິນອາຫານ ໃຫ້ຖືກຫຼັກ ອະນາມັຍ, ອາດຊ່ວຍໃຫ້ເຊົາຈາກພຍາດໄດ້.

## ຂ້ອຍຈະຮູ້ໄດ້ຢ່າງໃດວ່າຂ້ອຍຕິດເຊື້ອໄວຣັສ ບາຣ໌ມາຟໍແຣສ ແລ້ວ?

- ຖ້າທ່ານມີອາການ, ໃຫ້ໄປຫາທ່ານໝໍ, ເພິ່ນສາມາດສັ່ງໃຫ້ກວດເລືອດເພື່ອໃຫ້ຮູ້ວ່າ ທ່ານ ຕິດເຊື້ອ ໄວຣັສ ບາຣ໌ມາຟໍແຣສ ຫຼືບໍ່.

## ຈະປ້ອງກັນພຍາດບາຣ໌ມາຟໍແຣສ ໄດ້ຫຼືບໍ່?

- ການປ້ອງກັນທີ່ໄດ້ຜົນທີ່ສຸດກໍແມ່ນໃຫ້ຫຼີກເວັ້ນຈາກການຖືກຍຸງກັດ,
  ໂດຍສະເພາະໃນລະຫວ່າງ ຣະດູຮ້ອນ ແລະຣະດູ ໃບໄມ້ຫຼົ່ນ.
- ໃຫ້ຫຼີກເວັ້ນຈາກການຢູ່ຂ້າງນອກໃນເວລາຄ້ອຍບ່າຍແລະຍາມເລີ້ມຄໍ່າ.
  ຍຸງສ່ວນຫຼາຍຈະອອກຫາກິນ ຈາກ 1-3 ຊົ່ວໂມງຫຼັງ ຈາກຕາເວັນຕົກດິນ ແລະອີກເທື່ອນຶ່ງ ໃນລະຫວ່າງເຊົ້າໆ ຕອນຕາເວັນຂຶ້ນ.
- ເມື່ອຍາມຢູ່ທາງນອກ ໃຫ້ໃສ່ເຄື່ອງນຸ່ງຫຼົມໆ ມີສີແຈ້ງ ແລະໃຫ້ປົກແຂນແລະຂາໄວ້, ແລະ ໃຫ້ໃຊ້ຢາທາໄລ່ແມງໄມ້ຊຶ່ງມີສ່ວນປະກອບຂອງ ສານເຄມີ diethyl toluamide (DEET) ຫຼື Picaridin.
- ໃຫ້ຕິດຕັ້ງຕານ່າງໃສ່ ປ່ອງຢ້ຽມ, ປະຕູ ທຸກໆບ່ອນ ແລະ ປ່ອງໄຟ (ຍາມບໍ່ໃຊ້) ແລະ ໃຫ້ຕານ່າງຢູ່ໃນ ສະພາບດີສເມີ.
- ໃຫ້ໃຊ້ຢາຂ້າແມງໄມ້ຕາມຫ້ອງນອນ ຕາມຄໍາແນະນໍາທີ່ຢານັ້ນຂຽນໄວ້.
- ໃຫ້ແນ່ໃຈວ່າໃຫ້ເອົາຖັງນໍ້າທີ່ບໍ່ມີຝາອອກຫ່າງຈາກເຂດອ້ອມແອ້ມເຮືອນເພື່ອປ້ອງກັນບໍ່ໃຫ້ຍຸງ ໄຂ່ໃສ່ໃນຖັງນັ້ນ.

- ເວລາໄປນອນປ່າ (ແຄ່ມປີ້ງ), ໃຫ້ໃຊ້ຄວາມຣະມັດຣະວັງເຊັ່ນໃຊ້ຕານ່າງຢູ່ຣິດຕູ້ຄາຣາວານ ແລະ ເຕັນ, ແລະ ໃຫ້ນອນຢູ່ມຸ້ງທີ່ກັນຍູງໄດ້.
- ໃຫ້ຣະວັງເປັນພິເສດຍາມໄປຕຶກເບັດ, ໃຫ້ແນ່ໃຈວ່າທ່ານໄດ້ກະທຳຕາມຂັ້ນຕອນປ້ອງກັນຕົນເອງເພື່ອຫຼີກເວັ້ນຈາກການຖືກຍູງກັດ.

**ຣາຍລະອຽດເພີ້ມເຕີມ - Public Health Units in NSW (ໜ່ວຍອະນາມັຍສາທາຣະນະໃນຣັດ** NSW)

ຖ້າຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ໜ່ວຍອະນາມັຍສາທາຣະນະທ້ອງຖິ່ນ ຫຼື ສູນອະນາມັຍຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ 'NSW Government' ທາງໜ້າຂອງປື້ມໂທຣະສັບ ຫົວຂາວ.

**ເຂດໃນຕົວເມືອງ**

| | |
|---|---|
| Central Sydney | 9515 3180 |
| South Eastern Sydney | 9382 8333 |
| Northern Sydney | 9477 9400 |
| South Western Sydney | 9828 5944 |
| Western Sydney | 9840 3603 |
| Wentworth | 4734 2022 |

**ເຂດຊົນນະບົດ**

| | |
|---|---|
| Central Coast | 4349 4845 |
| Mid North Coast | 6588 2750 |
| Mid Western | 6339 5548 |
| Hunter | 4924 6477 |
| Illawarra | 4255 2200 |
| New England | 6766 2288 |
| Northern Rivers | 6620 7500 |
| Macquarie | 6841 2216 |
| Southern | 4827 3428 |
| Greater Murray | 6021 4799 |
| Far West | (08) 8080 1499 |

**NSW Department of Health**
73 Miller Street
North Sydney NSW 2059
Tel. (02) 9391 9000
Fax. (02) 9391 9101
TTY. (02) 9391 9900

NSW Health website
www.health.nsw.gov.au